# San Diego Unified School District

EUGENE BRUCKER EDUCATION CENTER
4100 Normal Street, San Diego, CA 92103-2682

Terry B. Grier, Ed.D.
Superintendent

ເດືອນເມສາ, **2008**

ເຖິງພໍ່ແມ່/ຜູ້ປົກຄອງນັກຮຽນທີ່ນັບຖື:

ເດືອນມິນາ ວັນທີ **24** ເປັນວັນທຳອິດທີ່ຂ້າພະເຈົ້າເຂົ້າມາເປັນຫົວໜ້າບໍລິຫານສູນກາງສຶກສາແຊນດິເອໂກ. ຂ້າພະເຈົ້າມີຄວາມດີໃຈທີ່ສຸດທີ່ໄດ້ມາຢູ່ແຊນດິເອໂກນີ້. ດັ່ງທີ່ຂ້າພະເຈົ້າໄດ້ໃຊ້ເວລາຢ້ຽມຢາມໂຮງຮຽນຕ່າງໆ – ໄດ້ພົບກັບພວກນັກຮຽນ, ນາຍຄຣູ, ແລະ ຫົວໜ້າໝວດໂຮງຮຽນນັ້ນ – ຂ້າພະເຈົ້າກໍຫວັງວ່າຈະໄດ້ພົບກັບກັບຫລາຍໆທ່ານເຊັ່ນດຽວກັນ.

ກ່ຽວກັບໜ້າທີ່ວຽກງານຜ່ານມາຂອງຂ້າພະເຈົ້ານັ້ນ, ຂ້າພະເຈົ້າເຄີຍເປັນຄຣູສອນໂຮງຮຽນມັທຍົມ, ຜູ້ແນະນຳນາຍຄຣູ, ຮອງຫົວໜ້າໝວດ, ຫົວໜ້າໝວດໂຮງຮຽນ ແລະ ຮອງຜູ້ບໍລິຫານສູນກາງສຶກສາ. ເມື່ອມໍ່ໆຜ່ານມານີ້ກໍໄດ້ເປັນຫົວໜ້າບໍລິຫານສູນກາງສຶກສາເຂດເທສບານກຽວຟອດ (**Guilford County**) ຣັຖ ນອຕແຄໂຣໄລນາ (**North Carolina**) ຊຶ່ງໄດ້ຮັບຕຳແໜ່ງນີ້ ນັບແຕ່ປີ **2000** ເປັນຕົ້ນມາ. ປັດຈຸບັນນີ້ຂ້າພະເຈົ້າຖືວ່າເປັນກຽດຢ່າງຍິ່ງທີ່ໄດ້ເຂົ້າມາຮັບໃຊ້ເປັນຫົວໜ້າບໍລິຫານສູນກາງສຶກສາຂອງທ່ານ.

ກ່ອນວັນທີ **25** ມິນາ ຂ້າພະເຈົ້າໄດ້ໃຊ້ເວລາຢູ່ໃນແຊນດິເອໂກນີ້ຫລາຍອາທິດ ເພື່ອເຂົ້າໃຈສະພາບທົ່ວໄປຂອງໂຮງຮຽນ ແລະ ເພື່ອຊ່ອຍເຫລືອບັນຫາກ່ຽວກັບງົບປະມານທີ່ຖືກຕັດຢ່າງຮ້າຍແຮງໃນປັດຈຸບັນນີ້. ຂໍ້ສເນີຕັດງົບປະມານການສຶກສາຂອງຣັຖຄາລີຟໍເນັຍເມື່ອມໍ່ໆມານີ້ ຈະເປັນການເສັຍຫາຍຢ່າງຮ້າຍແຮງແກ່ເດັກນ້ອຍຂອງພວກເຮົາ. ພວກເຮົາທັງຫລາຍຮູ້ສຶກເຊັ່ນນັ້ນເຫມືອນກັນ. ການໂທຣະສັບ, ການຂຽນໜັງສື ແລະ ອີແມລ ຂອງທ່ານເຂົ້າຫານັກການເມືອງເພື່ອສນັບສນູນໂຮງຮຽນຂອງພວກເຮົານັ້ນ ຈະເປັນສິ່ງພໍອົກພໍໃຈທີ່ສຸດແກ່ພວກເຮົາ. ໃນໄວໆນີ້ພວກເຮົາຈະໄດ້ເປັນເຈົ້າພາບການປະຊຸມຕິດຕໍ່ກັນໄປ ເພື່ອຊີ້ແຈງຂ່າວກ່ຽວກັບສະພາບການເລື້ອງຕັດງົບປະມານ. ຂ້າພະເຈົ້າຂໍຊຸກຍູ້ ແລະ ເຊີນທ່ານເຂົ້າຮ່ວມໃນການປະຊຸມເຫລົ່ານີ້ເພື່ອຮັບຟັງ, ຮຽນຮູ້ ແລະ ສອບຖາມທຸກໆຢ່າງທີ່ກ່ຽວຂ້ອງກັບເດັກຂອງພວກເຮົາ.

ທ່ານສາມາດແກ້ໄຂສະພາບການຂອງການຕັດງົບປະມານໃນປັດຈຸບັນນີ້ໄດ້ ໂດຍຊ່ອຍໃຫ້ເດັກຂອງທ່ານມາເຂົ້າໂຮງຮຽນທຸກໆວັນໃນເວລາເຂົາເຈົ້າມີສຸຂພາບດີ. ທຶນໂຮງຮຽນຂອງພວກເຮົາຂຶ້ນກັບ ເງິນສເລັ່ຍການມາເຂົ້າໂຮງຮຽນປະຈຳວັນ (**ADA**) ຂອງພວກນັກຮຽນ ແລະ ສຳຫລັບນັກຮຽນແຕ່ລະຄົນຂາດໂຮງຮຽນມື້ນຶ່ງນັ້ນ ຈະຂາດເງິນໄປປະມານ **$50** ຕໍ່ຄົນ. ຂໍໃຫ້ພຍາຍາມວາງແຜນຢຸດພັກການ ໃນຊ່ວງເວລາໂຮງຮຽນພັກ. ອັນນີ້ຈະຊ່ອຍເດັກຂອງທ່ານ ແລະ ໂຮງຮຽນຂອງພວກເຮົາຫລາຍ. ການຄົ້ນຄວ້າໄດ້ຄົ້ນພົບວ່າ ການຕິດຕໍ່ພົວພັນອັນແຈ່ມແຈ້ງ ກັບຫ້ອງການກຳກັບການມາໂຮງຮຽນນັ້ນ ເຮັດໃຫ້ເດັກມີຄວາມສຳເຣັດໃນວິຊາການຮຽນ. ທ່ານສາມາດອ່ານເພີ້ມເຕີມໄດ້ທີ່ **http://www.sandi.net/programs/everydaycounts/index.html.**

ປັດຈຸບັນນີ້ການມາເຂົ້າໂຮງຮຽນຍິ່ງມີຄວາມສຳຄັນຫລາຍທີ່ສຸດ ຍ້ອນວ່າພວກນັກຮຽນກຳລັງທຳການສອບເສັງໃນຊ່ວງລະດູໃບໄມ້ປົ່ງ. ຜົນຂອງການສອບເສັງນີ້ ຈະໃຫ້ລາຍລະອຽດສຳຄັນແກ່ພໍ່ແມ່ກ່ຽວກັບຄວາມກ້າວໜ້າຂອງເດັກ, ຈະຊ່ວຍໃຫ້ນາຍຄຣູເຈາະຈົງໃສ່ເຂດວິຊາທີ່ນັກຮຽນຕ້ອງການໃຫ້ມີການປັບປັບປຸງ, ຊ່ອຍໃຫ້ສູນກາງສຶກສາຕັດສີນ ວ່າໂຄງການຮຽນອັນໃດຖືກຕ້ອງເຫມາະສົມດີ ເພື່ອຊ່ອຍໃຫ້ນັກຮຽນທຸກໆຄົນ ໄດ້ຮຽນເຖິງຂັ້ນມາຕຖານລະດັບຊັ້ນຮຽນ. ຜູ້ອອກນະໂຍບາຍຣັຖບານຂອງຣັຖ ແລະ ຣັຖບານກາງໄດ້ໃຊ້ຜົນຂອງການສອບເສັງ ເພື່ອລາຍງານການຮັບຜິດຊອບ – – ເພື່ອວັດແທກຄວາມຖືກຕ້ອງເຫມາະສົມຂອງໂຮງຮຽນ ແລະ ຂອງໂຄງການຮຽນຕ່າງໆ.

ຂ້າພະເຈົ້າຫວັງວ່າຈະໄດ້ເຮັດວຽກຮ່ວມກັບບັນດາທ່ານ. ຂໍຂອບໃຈທີ່ທ່ານໄດ້ໃຫ້ການສນັບສນູນເດັກຂອງທ່ານຕລອດມາ – ແລະ ທຸກສິ່ງທຸກຢ່າງ – ທີ່ຢູ່ທາງບ້ານ ແລະ ທີ່ໂຮງຮຽນ. ການພົວພັນຂອງພໍ່ແມ່ຕໍ່ການດຳເນີນງານດ້ານການສຶກສານັ້ນ ເປັນສິ່ງສຳຄັນທີ່ສຸດຕໍ່ຄວາມສຳເຣັດຂອງນັກຮຽນ, ແລະ ໃນປັດຈຸບັນນີ້ຍິ່ງມີຄວາມສຳຄັນຫລາຍທີ່ສຸດ.

ດ້ວຍຄວາມນັບຖືຢ່າງສູງ,

Terry B. Grier, Ed.D.
Superintendent

**BECOMING AMERICA'S BEST**

*XK., 03-20-08, Superintendent letter for April 2008 / Lao Version*